# ໃບຄໍາຮ້ອງຂໍເຊົ່າໃຊ້ບໍລິການໂທລະສັບພື້ນຖານ

(Telephone Application Form)

ເລກທີ............/
ວັນທີ........../......./.....

**ເລື່ອງ:** ☐ ຂໍຕິດຕັ້ງ ☐ ຂໍຍົກຍ້າຍ ☐ ຂໍປ່ຽນຊື່ ☐ ຂໍປ່ຽນເບີ ☐ ຕໍ່ພວງ ☐ ຖົກຖອນ

**ປະເພດອຸປະກອນ:** ☐ ໂທລະສັບ ☐ ໂທລະສານ ☐ ຕູ້ສາຂາ ☐ ອື່ນໆ............................... ........ .................

**ປະເພດຜູ້ຈັບຈອງ:** ☐ ອົງການລັດ ☐ ອົງການຈັດຕັ້ງສາກົນ ☐ ທຸລະກິດ ☐ ລັດວິສາຫະກິດ ☐ ສ່ວນບຸກຄົນ ☐ ລທລ

ນໍ້າເບີໂທ (Tel. No) ☐☐☐☐☐☐ ໜ່ວຍໂທລະສັບ (Tel.Set) ☐ ຊື້ນໍາ ລທລ ☐ ມີຂອງຕົນເອງແລ້ວ

- ຊື່ ແລະ ນາມສະກຸນຜູ້ຈັບຈອງ ( Name of customer)...........................................................................................

ເຮືອນເລກທີ່ (House No) ............................ຖະໜົນ (Street)..........................................ໜ່ວຍ (Unit)................

ບ້ານ (Village)..........................ເມືອງ (District).......................................ແຂວງ (province)...............................

*- ທີ່ຢູ່ບ່ອນສົ່ງ*

ຊື່ບຸກຄົນ/ອົງການ(Name/Organization name)...........................................................................................

ເຮືອນເລກທີ່ (House No) ............................ຖະໜົນ (Street).......................................ໜ່ວຍ (Unit).........

ບ້ານ (Village)...........................ເມືອງ (District).................................ແຂວງ(province)..........................

ຕູ້ໄປສະນີ (P.O.BOX): ............................ເບີຕິດຕໍ່ (Contact Tel.): ☐☐☐☐☐☐

*ແຜນທີ່ບ່ອນຕິດຕັ້ງ*

| *ຢັ້ງຢືນຈາກອໍານາດການປົກຄອງ/ອົງການຈັດຕັ້ງທີ່ກ່ຽວຂ້ອງ* | *ຜູ້ຮ້ອງຂໍ* |
|---|---|
| *ລາຍເຊັນ ແລະ ປະທັບຕາ:* | *ລາຍເຊັນ:* |
| *ຊື່ແຈ້ງ:.................................ວັນທີ/Date:..../..../.....* | *ຊື່ແຈ້ງ:...............................ວັນທີ/Date:....../..../.....* |

ລັດວິສາຫະກິດ ໂທລະຄົມລາວ ENTERPRISE OF TELECOMMUNICATIONS LAO

Saylom Rd 01000.P.O.Box 7953, Vientiane Lao P.D.R. Tel : (856)21 260015, Fax :(856) 21 260051, E-mail:hq@etllao.com

## ເງື່ອນໄຂການປະກອບເອກະສານຂໍຈົດທະບຽນ

1. ບຸກຄົນທົ່ວໄປ ແລະ ຄົນຕ່າງດ້າວທີ່ອາໃສຢູ່ລາວ
- ☐ ສຳເນົາບັດປະຈຳຕົວ (ບັດຕ່າງດ້າວ) 1 ສະບັບ
- ☐ ສຳເນົາສຳມະໂນຄົວ 1 ສະບັບ
- ☐ ໃບຢັ້ງຢືນທີ່ຢູ່ຈາກອຳນາດການປົກຄອງບ້ານ 1 ສະບັບ

2. ອົງການຈັດຕັ້ງລັດ ແລະ ລັດວິສາຫະກິດ
- ☐ ໃບສະເໜີໃຫ້ຜູ້ມາພົວພັນວຽກ 1 ສະບັບ
- ☐ ໃບຄ້ຳປະກັນການຊຳລະໜີ້ ຈາກອົງການກ່ຽວຂ້ອງ 1 ສະບັບ
- ☐ ສຳລັບລັບລັດວິສາຫະກິດ ໃຫ້ສຳເນົາທະບຽນວິສາຫະກິດ 1 ສະບັບ

3. ບໍລິສັດ, ໂຮງງານ, ຫ້າງຮ້ານເອກະຊົນທົ່ວໄປ
- ☐ ໃບສະເໜີໃຫ້ຜູ້ມາພົວພັນວຽກ 1 ສະບັບ
- ☐ ສຳເນົາທະບຽນພ້ອມປະທັບຕາບ່ອນກ່ຽວຂ້ອງ 1 ສະບັບ
- ☐ ໃບຄ້ຳປະກັນການຊຳລະໜີ້ ຈາກອົງການກ່ຽວຂ້ອງ 1 ສະບັບ

4. ສະຖານທູດ ແລະ ອົງການຈັດຕັ້ງສາກົນ
- ☐ ໃບສະເໜີໃຫ້ຜູ້ມາພົວພັນວຽກ 1 ສະບັບ
- ☐ ໃບຄ້ຳປະກັນການຊຳລະໜີ້ ຈາກອົງການກ່ຽວຂ້ອງ 1 ສະບັບ

5. ຄົນຕ່າງປະເທດທີ່ອາໃສຢູ່ລາວ
- ☐ ສຳເນົາໜັງສືຜ່ານແດນ 1 ສະບັບ
- ☐ ໃບຄ້ຳປະກັນການຊຳລະໜີ້ ຈາກອົງການກ່ຽວຂ້ອງ 1 ສະບັບ

## ເງື່ອນໄຂການປະກອບເອກະສານການບໍລິການ ຫຼັງການຂາຍ

1. ການບໍລິການຂໍຍົກຍ້າຍ
- ☐ ໃບຢັ້ງຢືນມອບກຳມະສິດ (ຖ້າເຈົ້າຂອງຕົວຈິງບໍ່ມາ) 1 ສະບັບ
- ☐ ໃບຄຳຮ້ອງທີ່ຢັ້ງຢືນຈາກອຳນາດການປົກຄອງ 1 ສະບັບ

2. ການບໍລິການປ່ຽນຊື່
- ☐ ໃບຢັ້ງຢືນມອບກຳມະສິດ 1 ສະບັບ
- ☐ ໃບຄຳຮ້ອງທີ່ຢັ້ງຢືນຈາກອຳນາດການປົກຄອງ 1 ສະບັບ

3. ການບໍລິການປ່ຽນເບີ
- ☐ ໃບຢັ້ງຢືນມອບກຳມະສິດ (ຖ້າເຈົ້າຂອງຕົວຈິງບໍ່ມາ) 1 ສະບັບ
- ☐ ໃບຄຳຮ້ອງທີ່ຢັ້ງຢືນຈາກອຳນາດການປົກຄອງ 1 ສະບັບ

4. ການບໍລິການພິເສດ
- ຜູ້ໃຊ້ບໍລິການ ຈະຕ້ອງເລືອກດ້ວຍຕົນເອງ ໂດຍປະກອບຄຳຮ້ອງ ຕາມທີ່ ລທລ ກຳນົດອອກ.

## ເງື່ອນໄຂການຄ້ຳປະກັນໜ່ວຍໂທລະສັບ

- ສຳລັບລູກຄ້າທີ່ຊື້ໜ່ວຍໂທລະສັບຕັ້ງໂຕະຈາກ ລທລ ແມ່ນທາງ ລທລ ຈະຮັບປະກັນສິນຄ້າໃນໄລຍະເວລາ 6 ເດືອນໃນເງື່ອນໄຂການໃຊ້ງານປົກກະຕິ ຕາມມາດຖານຂອງຕົວເຄື່ອງ.
- ໃນກໍລະນີສິນຄ້າຫາກຕົກເຮ່ຍ, ເສຍຫາຍ ຫຼື ເປ່ເພ ທີ່ເກີດຈາກຄວາມຮັບຜິດຊອບຂອງລູກຄ້າເອງ, ລທລ ຈະບຮັບຜິດຊອບໃນການສ້ອມແປງທົດແທນຄືນ.
- ໜ່ວຍທີ່ລູກຄ້າເອົາມາຂຶ້ນທະບຽນນຳ ລທລ ຈະບໍ່ຄ້ຳປະກັນ ການໃຊ້ງານໃນທຸກກໍລະນີ.

## ເງື່ອນໄຂການເຊົ່າໃຊ້ບໍລິການ

1. ຜູ້ໃຫ້ບໍລິການໝາຍເຖິງ ລັດວິສາຫະກິດ ໂທລະຄົມລາວ (ລທລ).
2. ຜູ້ເຊົ່າໃຊ້ບໍລິການໝາຍເຖິງ ຜູ້ຕົກລົງເຊົ່າເລກໝາຍ ຫຼື ຜູ້ເຊົ່າໃຊ້ການບໍລິການຕ່າງໆ.
3. ຜູ້ເຊົ່າໃຊ້ບໍລິການຕົກລົງເຊົ່າເລກໝາຍ, ຄ່າໃຊ້ບໍລິການ, ຄ່າທຳນຽມ ແລະ ເງື່ອນໄຂຕ່າງໆທີ່ ລທລ ກຳນົດອອກ.
4. ຜູ້ເຊົ່າໃຊ້ບໍລິການຕ້ອງຊຳລະຄ່າບໍລິການຕາມຈຳນວນເງິນໃນໃບບິນ ແລະ ພາຍໃນກຳນົດເວລາທີ່ ລທລ ກຳນົດອອກ.
5. ຜູ້ຂໍເຊົ່າໃຊ້ບໍລິການຕ້ອງປະຕິບັດລະບຽບ, ເງື່ອນໄຂ ແລະ ຂໍ້ກຳນົດຂອງ ລທລ ທີ່ໃຊ້ໃນປະຈຸບັນ ແລະ ຈະມີຂຶ້ນໃນອະນາຄົດ.
6. ຜູ້ເຊົ່າໃຊ້ບໍລິການຕ້ອງບໍ່ໃຫ້ເຊົ່າ, ໂອນສິດທັງໝົດ ຫຼື ບາງສ່ວນໃນການເຊົ່າໃຊ້ບໍລິການ ຕາມສັນຍານີ້ໃຫ້ແກ່ຄົນອື່ນ ເວັ້ນເສຍແຕ່ໄດ້ຮັບຄວາມເຫັນດີທີ່ບັນທຶກເປັນລາຍລັກອັກສອນຈາກ ລທລ.
7. ຜູ້ເຊົ່າໃຊ້ບໍລິການຕ້ອງຍິນຍອມ ແລະ ອຳນວຍຄວາມສະດວກໃຫ້ແກ່ ລທລ ຫຼືຕົວແທນຂອງ ລທລ ໃນການກວດສອບແກ້ໄຂການຂັດຂ້ອງຂອງ ໂທລະສັບໄດ້ທຸກເວລາທີ່ ລທລ ເຫັນສົມຄວນ ແລະ ປະຕິບັດຕາມຄຳແນະນຳຂອງ ລທລ ຫຼື ຕົວແທນຂອງ ລທລ ໃນເລື່ອງຂອງການນຳໃຊ້ເຄື່ອງ.
8. ລທລ ຈະບໍ່ຮັບຜິດຊອບໃນການເສຍຫາຍ ຂອງໜ່ວຍໂທລະສັບ ອຸປະກອນທີ່ຕໍ່ເຂົ້າເຮືອນທ່ານ ອັນເນື່ອງມາຈາກຄວາມຮັບຜິດຊອບ ຂອງທ່ານເອງທຸກກໍລະນີ.
9. ຫາກຜູ້ເຊົ່າໃຊ້ບໍລິການ ບໍ່ປະຕິບັດເງື່ອນໄຂຂໍ້ໃດຂໍ້ໜຶ່ງໃນສັນຍານີ້ ຫຼື ເຮັດຜິດກົດໝາຍ ໂທລະຄົມມະນາຄົມ ທີ່ໃຊ້ໃນປະຈຸບັນ ເງື່ອນໄຂທີ່ຈະປ່ຽນແປງໃນອະນາຄົດ ຫາກເປັນໄພຕໍ່ຄວາມໝັ້ນຄົງ ຂອງປະເທດຊາດ ຜິດກົດໝາຍບ້ານເມືອງ, ທຳລາຍວັດທະນາທຳ ອັນດີ ງາມຂອງຊາດ ເຊິ່ງເປັນຜົນນຳຄວາມເສຍຫາຍ ມາໃຫ້ຜູ້ອື່ນ ແລະ ສັງຄົມນັ້ນ ລທລ ມີສິດງົດການນຳໃຊ້ຂອງຜູ້ຂໍເຊົ່າໃຊ້ບໍລິການ ຫຼື ຍົກເລີກສັນຍາທັນທີ ໂດຍບໍ່ບອກກ່າວລ່ວງໜ້າ ແລະ ຜູ້ເຊົ່າໃຊ້ບໍລິການຕ້ອງຮັບຜິດຊອບຄວາມເສຍຫາຍທັງໝົດທີ່ເກີດຂຶ້ນພຽງແຕ່ຝ່າຍດຽວ.
10. ຫາກຜູ້ເຊົ່າໃຊ້ບໍລິການບໍ່ແມ່ນເຈົ້າຂອງກຳມະສິດ ໂທລະສັບດັ່ງກ່າວ ລທລ ມີສິດງົດການໃຫ້ບໍລິການ ໄດ້ຕາມທີ່ເຫັນສົມຄວນ.
11. ຜູ້ຂໍເຊົ່າໃຊ້ບໍລິການຈະຕ້ອງປະກອບເອກະສານໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມທີ່ ລທລ ກຳນົດອອກ ໃນແຕ່ລະເງື່ອນໄຂ.
12. ຖ້າຜູ້ເຊົ່າໃຊ້ບໍລິການໄດ້ງົດໃຊ້ບໍລິການຖາວນໄປແລ້ວ ຈະບໍ່ມີສິດກັບຄືນມາເປີດໃຊ້ບໍລິການເລກໝາຍດັ່ງກ່າວອີກ.
13. ກ່ອນທີ່ຈະມີການປ່ຽນແປງທະບຽນການບໍລິການຫຼັງການຂາຍ ຜູ້ເຊົ່າໃຊ້ບໍລິການ ຕ້ອງຊຳລະໜີ້ສິນຂອງຕົນໃຫ້ໝົດເສຍກ່ອນ.
14. ຜູ້ເຊົ່າໃຊ້ບໍລິການ ບໍ່ມີສິດດັດແກ້ປ່ຽນແປງ ຫຼື ເພີ່ມເຕີມອຸປະກອນຕິດຕັ້ງດ້ວຍຕົນເອງ ກໍລະນີທີ່ມີອາການເປ່ເພ ຫຼື ໃຊ້ງານບໍ່ສະດວກ ໃຫ້ຕິດຕໍ່ຫາ ລທລ ມາແກ້ໄຂຕາມເວລາອັນສົມຄວນ.
   - ຖ້າ ລທລ ຫາກກວດພົບການດັດແປງມາດຖານເຕັກນິກ ໃຊ້ອຸປະກອນທີ່ບໍ່ໄດ້ຂຶ້ນທະບຽນ ຜູ້ເຊົ່າໃຊ້ບໍລິການຈະຖືກປັບໄໝ ຫຼື ຟ້ອງຮ້ອງຈາກ ລທລ ຕາມກົດໝາຍຂອງ ສ.ປ.ປ ລາວ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****************

ລັດວິສາຫະກິດ ໂທລະຄົມລາວ
ພະແນກ ບໍລິການລູກຄ້າ
*ສູນບໍລິການ ສາຍລົມ*

ເລກທີ........../ ພກຕ
ວັນທີ......./......./......

## ໃບຢັ້ງຢືນຄໍ້າປະກັນຊໍາລະໜີ້
( ຈົດທະບຽນໃນນາມອົງການ )

ໃນນາມ ..........................................................................ຂໍຢັ້ງຢືນ ແລະ ຮັບປະກັນຊໍາລະໜີ້ສິນການເຊົ່າໃຊ້..........................................................................ເຊິ່ງໄດ້ຈົດທະບຽນ/ປ່ຽນແປງທະບຽນນໍາໃຊ້ນັບແຕ່ວັນທີ:........../........../................., ຍີ່ຫໍ້ :...............................................ລຸ້ນ.:............................................ນໍາເບີ: ⬡⬡⬡⬡⬡⬡⬡ ນໍາລັດວິສາຫະກິດ ໂທລະຄົມລາວ ແລະ ຈະປະຕິບັດຕາມເງື່ອນໄຂລະບຽບຫຼັກການ ທີ່ລັດວິສາຫະກິດ ໂທລະຄົມລາວ ວາງອອກ ລວມທັງການຊໍາລະຄ່າໃຊ້ບໍລິການດັ່ງນີ້:

ວິທີຈ່າຍເງິນ: | o ເງິນສົດ | o ເງິນໂອນ | o ແຊັກ | o Credit Card |

ດັ່ງນັ້ນ,ຈຶ່ງສ້າງເອກະສານໄວ້ 2 ຊຸດ ເພື່ອຮັກສາໄວ້ນໍາແຕ່ລະຝ່າຍ ໄວ້ເປັນຫຼັກຖານ. ເອກະສານສະບັບນີ້ມີຜົນສັກສິດ,ສາມາດໃຊ້ເປັນຫຼັກຖານໄດ້ໃນທາງກົດໝາຍ.

| *ຢັ້ງຢືນຄໍາປະກັນຊໍາລະໜີ້ຈາກການເງິນ ອົງການກ່ຽວຂ້ອງ* | *ພະນັກງານໂຕະບໍລິການ ລທລ ເຊັນຮັບ* |
|---|---|
| | |

*ໝາຍເຫດ:* - ເອກະສານນີ້ສ້າງຂຶ້ນເພື່ອປະກອບເຂົ້າໃນເງື່ອນໄຂການເຊົ່າໃຊ້ບໍລິການ ດ້ານໂທລະຄົມມະນາຄົມໂດຍສະເພາະ.
- ຖ້າຫາກມີການປ່ຽນຊື່/ໂອນກໍາມະສິດຈາກເຈົ້າຂອງເດີມ ໄປເປັນຜູ້ອື່ນ ໂດຍມີໃບມອບສິດຈາກອົງການກ່ຽວຂ້ອງ ແລະ ຮັບຮູ້ຈາກ ລັດວິສາຫະກິດ ໂທລະຄົມລາວ ແລ້ວ, ໃບຢັ້ງຢືນສະບັບນີ້ຖືວ່າຖືກລົບລ້າງ ໂດຍອັດຕະໂນມັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກກະລາດ ປະຊາທິປະໄຕ ວັດທະນາຖາວອນ
*****************

**ລັດວິສາຫະກິດ ໂທລະຄົມລາວ**
**ພະແນກ ບໍລິການລູກຄ້າ**
*ສູນບໍລິການ ສາຍລົມ* **ເລກທີ.........../ ພກຕ.**

# ໃບຢັ້ງຢືນມອບກຳມະສິດ

**ຂ້າພະເຈົ້າ O ທ່ານ O ນາງ O ສຳນັກງານ :...........................................................................................**
**ອາຍຸ :..................ປີ, ສັນຊາດ :......................................... ອາຊີບ :..............................................................**
ຢູ່ປະຈຸບັນບ້ານ :...................................ເມືອງ :........................ ແຂວງ:...........................................
ເຮືອນເລກທີ :...............................ຖະໜົນ.....................ໜ່ວຍ....................ຄຸ້ມ...............................
ໄດ້ຈົດເຂົ້າສຳມະໂນຄົວເລກທີ .......................................ລົງວັນທີ..............ເດືອນ..........ປີ..................
ຖືບັດປະຈຳຕົວ ຫຼື ປັດສະປໍເລກທີ່...................................ລົງວັນທີ່..............ເດືອນ...........ປີ.................
ເຊິ່ງມີສິດນຳໃຊ້..........................................................ນຳ້ເບີ (.....................................................)
ຊື່ງໄດ້ຕິດຕັ້ງ ແລະ ນຳໄຊ້ແຕ່ວັນທີ່ ................ເດືອນ..............ປີ............................. ມາເຖິງປະຈຸບັນນີ້.
ເນື່ອງຈາກວ່າ :.........................................................................................................................
ດັ່ງນັ້ນ,ຂ້າພະເຈົ້າຂໍມອບກຳມະສິດນຳໄຊ້ນຳ້ເບີ .........................................ດັ່ງກ່າວ ໃຫ້ເປັນກຳມະສິດຂອງ
ທ້າວ O ຫຼື ນາງ O ........................................ອາຍຸ.........ປີ,ສັນຊາດ...............ອາຊີບ.........................
ຢູ່ປະຈຸບັນບ້ານ :...................................ເມືອງ :........................ ແຂວງ:...........................................
ເຮືອນເລກທີ :...............................ຖະໜົນ.....................ໜ່ວຍ....................ຄຸ້ມ...............................
ໄດ້ຈົດເຂົ້າສຳມະໂນຄົວເລກທີ .......................................ລົງວັນທີ..............ເດືອນ..........ປີ..................
ຖືບັດປະຈຳຕົວ ຫຼື ປັດສະປໍເລກທີ່...................................ລົງວັນທີ່..............ເດືອນ...........ປີ.................

ຖ້າມີບັນຫາ ຫຼື ກໍລະນີຕ່າງໆ ກ່ຽວກັບການມອບກຳມະສິດນຳໄຊ້ນີ້ ຂ້າພະເຈົ້າຈະຮັບຜິດຊອບພຽງຝ່າຍດຽວ ສະເໜີໃຫ້ ລັດວິສາຫະກິດ ໂທລະຄົມລາວ ພິຈາລະນາຕາມທາງຄວນດ້ວຍ.

ວຽງຈັນ,ວັນທີ່.......ເດືອນ.......ປີ........... ວຽງຈັນ,ວັນທີ່.......ເດືອນ.......ປີ...........

**ຜູ້ຮັບກຳມະສິດ** **ຜູ້ມອບກຳມະສິດ**

ວຽງຈັນ,ວັນທີ່.......ເດືອນ........ປີ...........

**ລາຍເຊັນການຈັດຕັ້ງກ່ຽວຂ້ອງ**